ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ
****

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

VIENTIANE CENTER
ວຽງຈັນເຊັ້ນເຕີ

ເລກທີ: 006 /ວຈຊຕ

ນະຄອນຫຼວງວຽງຈັນ, ວັນທີ: 05 MAR 2026

ຮຽນ: ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ທີ່ນັບຖື
ທ່ານ ຜູ້ອຳນວຍການໃຫຍ່ຕະຫຼາດຫຼັກຊັບລາວ ທີ່ນັບຖື
ບັນດາ ຜູ້ຖືຮຸ້ນຂອງບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ ທີ່ນັບຖື

ເລື່ອງ: ແຈ້ງມະຕິກອງປະຊຸມວິສາມັນ ສະພາບໍລິຫານຂອງບໍລິສັດວຽງຈັນເຊັ້ນເຕີ ລາວ ມະຫາຊົນ ຄັ້ງທີ 1 ປະຈຳປີ 2026.

- ອີງຕາມ ຂໍ້ຕົກລົງຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ສະບັບ ເລກທີ 27/ຄຄຊ, ລົງວັນທີ 29 ມີນາ 2022.
- ອີງຕາມ ລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ສະບັບເລກທີ 008/ຕລຊ, ລົງວັນທີ 27 ກັນຍາ 2018.

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ (ວຈຊຕ) ຂໍຖືເປັນກຽດແຈ້ງມະຕິຂອງກອງປະຊຸມວິສາມັນ ສະພາບໍລິຫານ ຄັ້ງທີ 1 ປະຈຳປີ 2026 ໃນ ວັນທີ 05 ມີນາ 2026, ເຊິ່ງມີລາຍລະອຽດດັ່ງລຸ່ມນີ້ :

<u>ມະຕິ :</u> ເຫັນດີຮັບຮອງແຜນການຈັດກອງປະຊຸມຜູ້ຖືຮຸ້ນປະຈຳປີ 2025 ດັ່ງນີ້:

1. ກຳນົດເອົາວັນທີ 20/03/2025 ເປັນມື້ປິດປຶ້ມບັນຊີທະບຽນຜູ້ຖືຮຸ້ນຂອງ ວຈຊຕ ເພື່ອກຳນົດສິດຂອງຜູ້ຖືຮຸ້ນໃນການເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ວຈຊຕ ປະຈຳປີ 2025;

2. ວັນ ເວລາ ແລະ ສະຖານທີ່ຈັດກອງປະຊຸມສາມັນຜູ້ຖືຮຸ້ນ ວຈຊຕ ປະຈຳປີ 2025 ແມ່ນການົດເອົາວັນທີ 30/04/2026 ເວລາ 14:00 ໂມງ ທີ່ຫ້ອງປະຊຸມ ຊັ້ນ 2 ຂອງຕຶກສຳນັກງານ ວຽງຈັນເຊັ້ນເຕີ.

3. ເຫັນດີກຳນົດວາລະກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2025 ດັ່ງລຸ່ມນີ້:

1) ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມວິສາສາມັນຜູ້ຖືຮຸ້ນປະຈຳປີ 2024;
2) ພິຈາລະນາ ແລະ ຮັບຮອງບົດລາຍງານຜົນການດຳເນີນທຸລະກິດປະຈຳປີ 2025 ແລະ ບົດລາຍງານການເງິນຂອງ ວຈຊຕ ປະຈຳປີ 2025;
3) ພິຈາລະນາ ແລະ ຮັບຮອງ ແຜນການດຳເນີນທຸລະກິດ 2026 ຂອງ ວຈຊຕ;
4) ພິຈາລະນາ ແລະ ຮັບຮອງແຜນການຈັດສັນຜົນກຳໄລສຸດທິປະຈຳປີ 2025 ;
5) ພິຈາລະນາ ການແຕ່ງຕັ້ງບໍລິສັດກວດສອບບັນຊີພາຍນອກປະຈຳປີ 2026;
6) ພິຈາລະນາ ແລະ ຮັບຮອງການຄັດເລືອກ ສະມາຊິກສະພາບໍລິຫານ ສະໄໝທີ່ V;
7) ພິຈາລະນາ ແລະ ຮັບຮອງການຄັດເລືອກ ຄະນະກຳມະການຕ່າງໆ ຂອງ ວຈຊຕ;

8) ພິຈາລະນາ ແລະ ຮັບຮອງການປັບປ່ຽນຜູ້ຕາງໜ້ານິຕິບຸກຄົນຂອງບໍລິສັດ ວຈຊຕ;

9) ພິຈາລະນາ ແລະ ຮັບຮອງການດັດແກ້ກົດລະບຽບ ຂອງ ບໍລິສັດ ມາດຕາ 9 ວ່າດ້ວຍຜູ້ອຳນວຍການ ແລະ ມາດຕາ 12 ວ່າດ້ວຍສະພາບໍລິຫານ;

10) ເລື່ອງອື່ນໆ(ຖ້າມີ) ;

ດັ່ງນັ້ນ, ຈຶ່ງຮຽນມາຍັງທ່ານເພື່ອຊາບ ແລະ ໃຊ້ຕາງລາຍງານ.

ດ້ວຍຄວາມເຄົາລົບ ແລະ ນັບຖືຢ່າງສູງ

ສະມາຊິກສະພາບໍລິຫານ/ ຜູ້ອຳນວຍການໃຫຍ່

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ
Vientiane Center Lao Public Company

Wang Wei Kun